


# ຊຸດກວດແບບວ່ອງໄວ

# SLCMV-ICG

# STRIP TEST

## ສຳລັບກວດວິນິດໄສເຊື້ອ SLCMV ໃນມັນຕົ້ນ

*ກວດສອບວ່ອງໄວ • ງ່າຍຕໍ່ການພົກພາ • ຮູ້ຜົນໄວ • ກວດສອບໄດ້ເອງ*

**ໂລກໃບດ່າງມັນຕົ້ນທີ່ລະບາດໃນປະເທດໄທເກີດຈາກເຊື້ອໄວຣັດຊະນິດ Sri Lankan cassava mosaic virus (SLCMV)** ໃນກໍລະນີທີ່ລະບາດຮຸນແຮງ ສາມາດສ້າງຄວາມເສຍຫາຍຕໍ່ຜົນຜະລິດໄດ້ເຖິງ 80-100% ເຊິ່ງສາເຫດສຳຄັນຂອງການແຜ່ລະບາດຢ່າງວ່ອງໄວຂອງໂລກຄື ການນຳທ່ອນພັນທີ່ເປັນໂລກໄປປູກຕໍ່ ແລະ ມີແມງມີ່ຂາຍຢາສູບເປັນພາຫະ ດັ່ງນັ້ນ ການສຳຫຼວດແປງປູກ ແລະ ກວດຄັດກອງໄວຣັດໃນທ່ອນພັນຈະຊ່ວຍຫຼຸດຄວາມສ່ຽງຕໍ່ການນຳທ່ອນພັນທີ່ເປັນໂລກໄປປູກ ແລະ ຊະລໍການແຜ່ກະຈາຍຂອງໄວຣັດໄດ້



ນັກວິໄຈສູນພັນວິສະກຳ ແລະ ເທັກໂນໂລຍີຊີວະພາບແຫ່ງຊາດ (ໄບໂອເທັກ) ສຳນັກງານພັດທະນາວິທະຍາສາດ ແລະ ເທັກໂນໂລຍີແຫ່ງຊາດ (ສວທຊ.) ໄດ້ພັດທະນາເທັກນິກການກວດກອງໄວຣັດໃບດ່າງໃນຕົວຢ່າງມັນຕົ້ນ ແລະ ພັດທະນາ**ຊຸດກວດແບບວ່ອງໄວ**ສາມາດພົກພາໄປ**ໃຊ້ໃນພາກສະໜາມ ຮູ້ຜົນພາຍໃນ 15 ນາທີ ກະເສດຕະກອນສາມາດກວດສອບໄດ້ເອງ**

# ອຸປະກອນ

SLCMV-ICG : STRIP TEST




| | | |
|---|---|---|
| 01 | ນ້ຳຢາບັຟເຟີ | 1 ຫຼອດ |
| 02 | ຫຼອດດູດນ້ຳຢາ | 1 ອັນ |
| 03 | ຫຼອດໃສ່ນ້ຳຢາ | 1 ອັນ |
| 04 | ແຜ່ນທົດສອບ | 1 ແຜ່ນ |
| 05 | ຖົງບັນຈຸຕົວຢ່າງໃບພືດ | 1 ຖົງ |
| 06 | ຄູ່ມືການກວດ | 1 ສະບັບ |









# ຊຸດກວດແບບວ່ອງໄວ
# SLCMV-ICG STRIP TEST

## ວິທີການໃຊ້ຊຸດກວດ

**01 ກຽມໃບພືດ**



ກຽມໃບມັນຕົ້ນຂະ
ໜາດ 9 ຕາລາງຊັງຕີແມັດ
(ປະມານ 0.1 ກຣາມ) ໃສ່ລົງໃນຖົງ

**02 ໃສ່ນ້ຳຢາ**



ໃຊ້ຫຼອດດູດນ້ຳຢາບັຟເຟີ
ໃຫ້ເຕັມຫຼອດ ແລ້ວໃສ່ລົງໃນຖົງ 2 ຄັ້ງ
(ຄັ້ງລະ 0.5 ມິນລິແມັດ)

**03 ບົດໃບພືດ**



ບົດໃບພືດດ້ວຍຂອງແຂງ ເຊັ່ນ: ຫຼຽນ
ຈົນໃບພືດແຫຼກລະອຽດ ແລະ ໃຊ້ຫຼອດດູດສະເພາະ
ສ່ວນນ້ຳຄັ້ນໃບພືດທີ່ເປັນສ່ວນໃສ
*ລະວັງບໍ່ໃຫ້ກາກໃບພືດປົນມານຳ*

**04 ຢົດນ້ຳຄັ້ນ**



ຢົດນ້ຳຄັ້ນໃບພືດລົງໃນຫຼອດ
ທີ່ກຽມໄວ້ໃຫ້ ຈຳນວນ 10 ຢົດ
(ປະມານ 0.25 ມິນລິແມັດ)

**05 ຈຸ່ມແຜ່ນທົດສອບ**



ນຳແຜ່ນທົດສອບຈຸ່ມລົງໃນນ້ຳຄັ້ນພືດ
ແຊ່ຖິ້ມໄວ້ 15 ນາທີ ແລະ ອ່ານຜົນ
*ລະວັງບໍ່ໃຫ້ປະລິມານຂອງນ້ຳຄັ້ນພືດ
ເກີນຂີດຂາວຂອງແຜ່ນທົດສອບ*

## ການແປຜົນ

**ຮູ້ຜົນພາຍໃນ 15 ນາທີ**




ຜົນບວກ

**+** ເກີດແຖບສີທັງ **Test line (T) ແລະ Control line (C)**
ສະແດງວ່າ ມີເຊື້ອ SLCMV ໃນຕົວຢ່າງ (ຜົນບວກ)




ຜົນລົບ

**−** ເກີດແຖບສີທີ່ **Control line (C) ຢ່າງດຽວ**
ສະແດງວ່າ ບໍ່ມີເຊື້ອ SLCMV ໃນຕົວຢ່າງ (ຜົນລົບ)




ອ່ານຜົນບໍ່ໄດ້

**ບໍ່ມີແຖບສີເກີດຂຶ້ນທີ່ Control line (C)**
ສະແດງວ່າ ບໍ່ສາມາດເຊື່ອຖືຜົນການກວດສອບຄັ້ງນີ້ໄດ້ (ອ່ານຜົນບໍ່ໄດ້)

**ຫາກຜົນທົດສອບເປັນບວກ ກະເສດຕະກອນຄວນຖອນທຳລາຍຕົ້ນ ມັນຕົ້ນຕິດໂລກໄວຣັດໃບດ່າງ ອອກຈາກແປງປູກ ເພື່ອປ້ອງກັນບໍ່ໃຫ້ເປັນແຫຼ່ງແຜ່ກະຈາຍຂອງໂລກໄປສູ່ຕົ້ນອື່ນ**

### ການຈັດການຊຸດກວດ

ຊຸດກວດນີ້ໃຊ້ຄັ້ງດຽວຖິ້ມ ຫຼັງຈາກທົດສອບແລ້ວ
ໃຫ້ບັນຈຸອຸປະກອນທົດສອບທຸກຢ່າງລົງຖົງ
ແລ້ວນຳໄປຖິ້ມນອກແປງ

**ຜະລິດສື່ ແລະ ເຜີຍແຜ່ໂດຍ**
ສະຖາບັນການຈັດການເທັກໂນໂລຍີ ແລະ ນະວັດຕະກຳກະເສດ (ສທ.)
ສຳນັກງານພັດທະນາວິທະຍາສາດ ແລະ ເທັກໂນໂລຍີແຫ່ງຊາດ (ສວທຊ.)
ໂທລະສັບ 0 2564 7000 ອີເມລ agritec@nstda.or.th
www.nstda.or.th/agritec